# ແຜນກູ້ພັຍໄຟລາມປ່າເກາະມາວອິ

## ພາກທີ 1: ການກວດລ້າງຍົກຍ້າຍສິ່ງເສດສານພິດ

**ເດືອນກັນຍາ 11, 2023**

*ເກາະມາວອີໄດ້ຕອບສນອງແກ່ຊາວໂລກຢ່າງຫຼວງຫຼາຍ. ໃນບາມແຂກຢ້ຽມຍາມ, ຖືເປັນກຽດໃຫ້ການອູ້ມຊູເປັນການຕອບແທນ.*

ກົມສະຫງວນປ້ອງກັນສິ່ງແວດລ້ອມແຫ່ງຊາດ (EPA) ໄດ້ຮັບມອບໝາຍ ຈາກກະຊວງຮັບຜິດຊອບການກູ້ພັຍ ສ້ອມແປງຍາມພາວະສຸກເສີນ (FEMA) ເພື່ອສຳລວດ, ກວດລ້າງ, ເກັບມ້ຽນ ສານພິດເຄມີອອກໜີຈາກ ເຂດທີ່ໄດ້ຮັບຜົນເສັຽຫາຍທຳລາຍຈາກ ໄຟລາມປ່າໃນເຂດເມືອງ ລາຮາຍ ນາ (Lāhainā) ເກາະມາວອີ (Maui). ທີມງານ EPA ໄດ້ສຳເຣັດວຽກໃນ ເຂດເມືອງ ຄູລາ (Kula).

ວຽກກວດລ້າງເສດສານພິດ ທີ່ກົມ EPA ຮັບຜິດຊອບ ແມ່ນຢູ່ໃນແຜນ **ພາກທີ 1** ຂອງໂຄງການລວມທີ່ຣັຖບານແຫ່ງຊາດ ໄດ້ບົ່ງການອອກມາ ຕອບສນອງ. ແຜນ**ພາກທີ 2** ຈະແມ່ນການຍົກຍ້າຍເສດສ່ວນເຜົາໄໝ້ທີ່ ເຫຼືອຢູ່ ແລະຈະແມ່ນກົມບໍຣິຫານໂຄງການເປັນຜູ້ຕັດສິນ.

**ລາຍການວຽກບໍຣິການບໍ່ເສັຽຄ່າໃຫ້ແກ່ຊຸມຊົນທ້ອງຖິ່ນ.**

**EPA ຈະເກັບມ້ຽນສິ່ງທີ່ຄົນໃຊ້ປະຈຳວັນເຊັ່ນ:**

- ✓ ນ້ຳຢາລ້າງ, ແລະ ນ້ຳມັນແຊ່ລະລາຍສີ
- ✓ ໄຂມັນ,ຖ່ານໂຄມໄຟ, ແລະ ຢາຂ້າແມງໄມ້

**ກົມ EPA ຍັງຈະເກັບກູ້ເອົາເສດສານ ອາສແບສຕັດສ໌ ແລະ ກວດ ແທກຄວາມດັນໃນເຕົ້າທີ່ໃຊ້ໃສ່ແກສສ໌ (ໂພຣເພນ).**

- ພາຍຫຼັງຈາກໄຟໄໝ້, ສິ່ງຂອງເຫຼົ່ານີ້ຕ້ອງໄດ້ໃຊ້ຄວາມຣະມັດຣະວັງເປັນພິເສດ, ໂດຍສເພາະຍາມ ຝາອັດຖືກເພພັງ.
- ກົມ EPA ຍັງຈະເກັບກູ້ສິ່ງທີ່ສົງໃສວ່າມີເສດສານ ອາສແບສຕັດສ໌ ຖ້າສັງເກດເຫັນໄດ້ງ່າຍວ່າມີ ຮ່ອງຮອຍຢູ່, ແຕ່ວ່າພື້ນທີ່ອາຄານນັ້ນຍັງກວດລ້າງໃຫ້ລະອຽດ ບໍ່ແລ້ວເທື່ອຈົນກວ່າລອບຕໍ່ໄປ ໃນພາກທີ 2.

**ຈະເຂົ້າໄປຢ້ຽມຢາມຖິ່ນເຂດ ຄຸ້ມຄອງຂອງທ່ານບໍ?**

ຜູ້ທີ່ເຂົ້າໄປກວດກາຍຽ້ມເບິ່ງອາຄານທີ່ ຖືກໄຟໄໝ້ ຄວນທີ່ຈະປະຕິບັດຕາມຄຳ ແນະນຳຂອງກະຊວງສາທາ ຣັດຮາວາຍ ອີ ເພື່ອປ້ອງກັນຮັກສາຄວາມປອດໄພ.

ຂີ້ເຖົ່າແລະສິ່ງເສດເຜົາໄໝ້ມີພິດຮ້າຍເຊັ່ນ ອາສແບສຕັດສ໌, ທາດຂີ້ກົ່ວ, ແລະສານພິດ ເບື່ອເມົາ ຊຶ່ງອາດເຂົ້າໂຕຄົນທາງລົມ ຫາຍໃຈ ຫຼືຕິດໂອບປົນເປີຢູ່ນຳສິ່ງແວດ ລ້ອມ.

**tinyurl.com/DOHwildfirehealth**



*ຕົວຢ່າງປະເພດເສດສານພິດທີ່ຈະຖືກຊຳລະອອກໄປ.*



*ຖັງເກັບເຄື່ອງເປົ່າ ທີ່ທີມ EPA ໄດ້ກວດກາແລ້ວ ຈະມີໝາຍເປັນໂຕ X ສີຂາວ ແລະປະໄວ້ເພື່ອຈະ ຍົກຍ້າຍໃນແຜນພາກທີ 2.*

# ຄຳຖາມທີ່ນິຍົມຖາມກັນຢູ່ເລື້ອຍໆ




**ທີມ EPA ຈະທຳການກວດລ້າງເສດສານພິດເຜົາໄໝ້ ອອກໄປຈາກພື້ນທີ່ດິນຂອງຂ້ອຍດ້ວຍວິທີໃດ?**

1. ທີມ EPA ຈະສຳຣວດກວດສະພາບວຽກໃນບ້ານຂອງທ່ານ.
2. ທີມ EPA ຈະກວດລ້າງເສດສານພິດອອກໄປເທື່ອທີສອງ.
3. ເມື່ອສຳເຣັດແລ້ວ, ທີມ EPA ຈະຕິດປ້າຍໃສ່ບ້ານຂອງທ່ານ *(ເບິ່ງຕົວຢ່າງເຄື່ອງໝາຍຢູ່ເບື້ອງຂວານີ້).*

<u>ສະພາບການພິເສດ</u>

- ຖ້າວ່າສະພາບພາຍໃນສະຖານທີ່ຂອງທ່ານບໍ່ມີຄວາມປອດໄພເພື່ອທີມງານ EPA ຈະເຂົ້າໄປເຮັດວຽກໄດ້, ການກວດລ້າງເສດສານພິດກໍຕ້ອງໄດ້ລໍຖ້າແຜນພາກທີ 2.

**ທີມ EPA ຈະກວດລ້າງຍົກຍ້າຍ ສະເພາະແຕ່ ສິ່ງເປັນສານພິດ<u>ເທົ່ານັ້ນ.</u>**
ຖ້າວ່າພົບເຫັນອາວຸດທີ່ຍັງໃຊ້ວຽກໄດ້ ຫຼືພາກສ່ວນເຫຼືອເຜົາ ໄໝ້ກໍຕາມ, ທີມ EPA ຈະຢຸດວຽກແລະແຈ້ງໃຫ້ເຈົ້າໜ້າທີຕຳຣວດເກາະມາວອີ ມາກວດກາ.

**ເປັນຫຍັງຈຶ່ງຕ້ອງຍົກຍ້າຍ ສິ່ງເປັນເສດສານພິດ?**

- ເສດສານພິດເປັນສິ່ງອັນຕະຣາຍຕໍ່ສິ່ງແວດລ້ອມ ແລະເຈົ້າຂອງທີ່ດິນໃນເຂດຊຸມຊົນ ແລະຈຳເປັນຕ້ອງກວດລ້າງອອກ ຢ່າງປອດໄພ ກ່ອນທີ່ຈະເລີ້ມບໍຣິຫານວຽກໄດ້ໃນພາກທີ 2.

**ຈຳເປັນບໍທີ່ EPA ຕ້ອງໄດ້ຮັບອະນຸຍາດ ກ່ອນທີ່ຈະເຂົ້າໄປໃນສະຖານທີ່ຄອບຄອງຂອງຂ້າພະເຈົ້າ?**

- ບໍ່. ຣັດຮາວາຍອີ ໄດ້ອອກຄຳສັ່ງໃນເດືອນ ສິງຫາ 10, 2023, ໃຫ້ອະນຸຍາດ EPA ມີສິດເຂົ້າໄປໃນສະຖານທີ່ໂດຍບໍ່ຕ້ອງ ການອະນຸຍາດຈາກເຈົ້າຂອງ.

**ທີມ EPA ຈະຊ່ອຍເກັບມ້ຽນສິ່ງອື່ນໆບໍ ນອກຈາກເສດສານ ພິດ?**

- ບໍ່. EPA ຈະກວດລ້າງເສດສານພິດ<u>ເທົ່ານັ້ນ.</u>

**ສະຖານທີ່ຂອງຄົນໃກ້ບ້ານຂ້ອຍໄດ້ຮັບການກວດລ້າງເອົາເສດສານພິດເຜົາໄໝ້ອອກໄປ ແຕ່ບ້ານຂ້ອຍຍັງບໍ່ໄດ້ເຮັດ. ເປັນຫຍັງ?**
ມີຫຼາຍກໍຣະນີທີ່ເປັນຕົ້ນເຫດໃຫ້ລາຍການວຽກຊັກຊ້າ:

- ທີມງານEPA ຈະບໍ່ລົງສນາມເມື່ອມີ ທີມງານອື່ນປະຕິບັດໜ້າວຽກຢູ່, ຍ້ອນວ່າຕ້ອງລະວັງປ້ອງກັນໄພ ຫຼືການອັ່ງອໍໃນສະ ຖານທີ່. ສະພາບອາກາດກໍເປັນສາເຫດນຶ່ງຢຸດຍັ້ງເວລາວາງລາຍການວຽກໃນສນາມ.
- ທີມງານລົງສນາມບໍ່ສາມາດເຮັດວຽກໄດ້ເມື່ອມີຕົ້ນໄມ້ກີດກັ້ນເປັນອັນຕະຣາຍບົນໜ້າພື້ນທີ່ດິນ, ຕຶກຕຶກເຄຫາສະຖານບໍ່ ແໜ້ນໜາ, ຫຼືສະພາບການທີ່ບໍ່ປອດໄພ. ສະຖານດັ່ງກ່າວຈະໄດ້ທຳການສະສາງໃນແຜນການພາກທີ 2 (ຍົກຍ້າຍເສດສິ່ງເຜົາໄໝ້ອອກ), ຊຶ່ງຈະບໍ່ແມ່ນວຽກຂອງ EPA.

**ເຄື່ອງໝາຍແຕ້ມດ້ວຍສີຕ່າງໆ ຕາມສະຖານທີ່ຂອງຂ້ອຍມີ ຄວາມໝາຍຢ່າງໃດ?**

- **ປັກຫຼັກເຄື່ອງໝາຍສີຂາວ:** ສະຖານທີ່ໄດ້ຜ່ານການກວດລ້າງເອົາສິ່ງເສດສານພິດອອກແລ້ວ.
- **ປ້າຍໝາຍດ້ວຍ ໂຕ X:** ກະຖັງໃສ່ເຄື່ອງສານພິດເປົ່າ ຫຼືວ່າ ກະຖັງທີ່ຕ້ອງປະໄວ້ກັບທີ່.
- **ປ້າຍໝາຍດ້ວຍ ໂຕ MT ສີຂາວ:** ນ້ຳມັນເຊື້ອເພີງໄດ້ເອົາອອກແລ້ວຈາກກະຖັງ, ແລະຕ້ອງປະຖັງໄວ້ຢູ່ກັບທີ່.
- **ພົ່ນນ້ຳສີ ສີແດງ**: ຕູ້ຈັບຜາໃສ່ ຕິດຕັ້ງຖ່ານລີທຽມ.
- **ພົ່ນນ້ຳສີ ສີບົວ:** ວັດຖຸສິ່ງໃສວ່າມີ ເສດສານພິດແອສແບສຕັດສ໌ (asbestos) ຈຶ່ງຈະຕ້ອງໃຊ້ເວລາຫຼາຍກ່ວາເຄິ່ງຊົ່ວໂມງ (> .5 hours) ແລະຕ້ອງປະໄວ້ຢູ່ກັບທີ່ ແລະຈະຖືກຍົກຍ້າຍໃນໂຄງການພາກທີ 2.
- **ພົ່ນນ້ຳສີ ສີສົ້ມ:** ສະຖານທີ່ຝັງຖັງນ້ຳຂີ້ສີກ, ໝໍ້ແຈກໄຟຟ້າເພເສັງແລ້ວ, ຫຼືວ່າສິ່ງເປັນພິດໄພແນວໃດອັນເປັນຕະຣາຍຕ້ອງປະໄວ້ໃຫ້ທີມຊ່ຽວຊານຊຳລະມ້ຽນໃຫ້ແລ້ວ.
- **ເຄື່ອງໝາຍສອງຂີດ =** (**equal sign**) ຢູ່ຕາມ**ຕົ້ນໄມ້:** ເຕືອນໃຫ້ລະມັດລະວັງ, ອາດຈະເປັນອັນຕະຣາຍຍາມມີລົມແຮງ.
- **ເຄື່ອງໝາຍ ໂຕ X ສີສົ້ມ**ຢູ່ຕາມ**ຕົ້ນໄມ້** – ຕົ້ນໄມ້ອັນຕະຣາຍ, ຢືນຢູ່ຫ່າງໆ ໄກໆອອກໄປ.
- **ໝາຍດ້ວຍລູກສອນ ສີສົ້ມ** ຢູ່ຕາມ**ຕົ້ນໄມ້ຊີ້ຂຶ້ນເບື້ອງເທິງ**– ເຕືອນບອກໃຫ້ລະມັດລະວັງ, ງ່າໄມ້ຈະຫັກ.
- **ປັກທຸງສີຟ້າ** – ທີ່ສຳຄັນທາງວັທນະທັມ,ຈົ່ງຣະມັດຣະວັງ.

**ຕ້ອງການຮູ້ຂໍ້ມູນກ່ຽວກັບວຽກຂອງ EPA, ຕິດຕໍ່ຖາມໄດ້ທີ່:**
ອີແມລ: R9Wildfiresinfo@epa.gov
ເວກໂທ: 808-539-0555
**ຫຼືວ່າເຂົ້າໄປເບິ່ງທີ່ ແອບໃຊ້:**
epa.gov/maui-wildfires
facebook.com/EPAregion9
twitter.com/EPAregion9
instagram.com/epagov
**ຂໍ້ມູນເພີ້ມເຕີມ ເລື່ອງ ອັກຄີໄພ ໄຟວາມປ່າເກາະມາວອີ, ຊອກຫາໄດ້ທີ່**
mauicounty.gov ແລະ mauinuistrong.info